JDB
ທະນາຄານຮ່ວມພັດທະນາ

| Position ID: | EXC_MON/CARD |
| --- | --- |

# ລາຍລະອຽດຂອງໜ້າວຽກ ແລະ ເງື່ອນໄຂການສະໝັກ

**ຊື່ຕໍາແໜ່ງ:** ພະນັກງານ ຕິດຕາມ ແລະ ກວດກາລາຍການບັດ (ສາຍດ່ວນ 1499)

**Position Name:** Card System Monitoring Officer (Hotline 1499)

❖ ໜ້າທີ່ຮັບຜິດຊອບຫຼັກ (ToR):

- ຕິດຕາມ ແລະ ກວດສອບລາຍການນໍາໃຊ້ບັດ ທີ່ຜ່ານເຂົ້າມາໃນລະບົບທະນາຄານ JDB;
- ກວດສອບ ແລະ ແກ້ໄຂບັນຫາເບື້ອງຕົ້ນ ລູກຄ້າຜູ້ຖືບັດຂອງ JDB ໄປໃຊ້ພາຍໃນ ແລະ ຕ່າງປະເທດ;
- ກວດສອບ ແລະ ແກ້ໄຂເບື້ອງຕົ້ນໃຫ້ ຮ້ານຄ້າ ທີ່ຮັບຊໍາລະສະສາງຜ່ານບັດ VISA/MasterCard/UPI /JCB/LAPS ທີມີທຸລະກໍາຜ່ານລະບົບຂອງ JDB;
- ກວດສອບ ແລະ ແກ້ໄຂເບື້ອງຕົ້ນ ລູກຄ້າບັດຕ່າງປະເທດຖືບັດ VISA/Master Card/UPI/JCB/ LAPS ທີ່ມີທຸລະກໍາຜ່ານຕູ້ເອທີເອັມ JDB;
- ບັນທຶກບັນຫາ, ຮັບຂໍ້ມູນ, ວິເຄາະຂໍ້ມູນ ແລະ ຕິດຕາມ ບັນຫາທີ່ໄດ້ແຈ້ງ ເຂົ້າມາຜ່ານລະບົບ ແລະ ສາຍດ່ວນ 1499;
- ຕໍ່ໂອນສາຍຫາທີມງານທີ່ກ່ຽວຂ້ອງ ເພື່ອແກ້ໄຂບັນຫາໃຫ້ລູກຄ້າທີ່ໄດ້ຕິດຕໍ່ເຂົ້າມາ ຜ່ານລະບົບ ແລະ ສາຍດ່ວນ 1499;
- ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຫົວໜ້າສາຍງານ.

❖ ວຸດທິການສຶກສາ (Academic Background):

- ຜູ້ທີ່ສະໝັກໃນຕໍາແໜ່ງນີ້ຈະຕ້ອງຮຽນຈົບລະດັບ ປະລິນຍາຕີ ຂຶ້ນໄປໃນສາຂາວິຊາ:
  - ວິສະວະກໍາໄອທີ, ວິສະວະກໍາຄອມພິວເຕີ ຫຼື ວິທະຍາສາດຄອມພິວເຕີ;
  - ການເງິນ-ການທະນາຄານ, ບໍລິຫານທຸລະກິດ (ທີ່ມີພື້ນຖານດ້ານເຕັກເນິກໄອທີ) ຫຼື ສາຂາອື່ນທີ່ກ່ຽວຂ້ອງ.

❖ ກ່ຽວກັບຜູ້ສະໝັກ (About Applicant):

- ຜູ້ສະໝັກທີ່ຮຽນຈົບໃໝ່ ຫຼື ມີປະສົບການເຮັດວຽກມາກ່ອນ ຍິ່ງເປັນການດີ;
- ຜູ້ສະໝັກຈະຕ້ອງ ສາມາດສື່ສານພາສາອັງກິດ ໃນລະດັບດີຫຼາຍ, ຖ້າໄດ້ ພາສາຈີນ ຫຼື ພາສາຕ່າງປະເທດໃດໜຶ່ງເພີ່ມຕື່ມ ຍິ່ງເປັນການດີ);
- ເປັນຄົນທີ່ມີມະນຸດສໍາພັນດີ, ສາມາດຕິດຕໍ່ປະສານງານກັບລູກຄ້າ ແລະ ຄູ່ຮ່ວມທຸລະກິດໄດ້ທຸກລະດັບ;
- ສາມາດເຮັດວຽກເປັນກະ (ຮອບເຊົ້າ, ຮອບແລງ, ຮອບເດິກ) ຕາມການມອບໝາຍໄດ້, ເນື່ອງຈາກວຽກງານນີ້ເປັນວຽກທີ່ຕ້ອງຮັບຜິດຊອບຕະຫຼາດ 24 ຊມ;
- ເປັນຄົນທີ່ບໍ່ເຄີຍກໍ່ຄະດີອາຍາ ແລະ ບໍ່ເຄີຍຖືກຕັດອິດສະພາບມາກ່ອນ;
- ເປັນຄົນທີ່ສາມາດເຮັດວຽກກັບເພື່ອນຮ່ວມງານຫຼາຍຄົນໄດ້, ມີຄວາມອົດທົນສູງ, ມີຄວາມລະອຽດໃນໜ້າວຽກທີ່ໄດ້ຮັບມອບໝາຍ, ມີຄວາມຊື່ສັດ, ແລະ ຍຶດໝັ້ນໃນໜ້າທີ່;
- ມີປະສົບການໃນວຽກງານຄວບຄຸມ ແລະ ກວດສອບລາຍການບັດ ຈະພິຈາລະນາເປັນພິເສດ.